| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດວິຊາຊີບເພສັດຊະກໍາ ເພື່ອສ້າງຕັ້ງໂຮງງານຜະລິດຢາ ແລະ ຜະລິດຕະພັນການແພດ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoPH-FDD-7 | 03.10.2017 | ກົມອາຫານ ແລະ ຢາ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດສະເພາະ ທີ່ຕິດພັນກັບໃບອະນຸຍາດ | Q - ການເຄື່ອນໄຫວກ່ຽວກັບສຸຂະພາບມະນຸດ ແລະ ວຽກງານທາງສັງຄົມ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ເຈົ້າຂອງໂຮງງານຜະລິດຢາ ແລະ ອຸປະກອນທາງການແພດຕ້ອງຮັບຜິດຊອບໂດຍກົງຕໍ່ຄວາມເສຍຫາຍທີ່ເກີດຂຶ້ນກັບຄົນໃດຫນຶ່ງຈາກການໃຊ້ຢາຫຼືອຸປະກອນທາງການແພດທີ່ເຂົາເຈົ້າຜະລິດ; ດັ່ງນັ້ນ, ຈຶ່ງຈໍາເປັນຕ້ອງມີການຄຸ້ມຄອງແລະຄວບຄຸມໂຮງງານເຫຼົ່ານັ້ນເພື່ອໃຫ້ແນ່ໃຈວ່າຢາແລະອຸປະກອນທາງການແພດທີ່ຈະຜະລິດມີຄຸນນະພາບ, ປະສິດທິພາບ ແລະ ມີຄວາມປອດໄພຕໍ່ສຸຂະພາບຂອງຜູ້ຊົມໃຊ້. |
| ຜູ້ທີ່ຕ້ອງຂໍ ໃບອະນຸຍາດ | ບຸກຄົນ ຫຼື ນິຕິບຸກຄົນທີ່ມີຈຸດປະສົງຢາກສ້າງຕັ້ງໂຮງງານ ທີ່ຜະລິດຢາ ແລະ ຜະລິດຕະພັນການແພດໃນ ສປປ ລາວ. |
| ມີຂໍ້ມູນໃບອະນຸຍາ | ແມ່ນແລ້ວ |

| ຂໍ້ມູນພື້ນຖານ | |
|---|---|
| ດ ອອນລາຍບໍ່? | |
| ທີ່ຢູ່ຂອງຂໍ້ມູນອອນລາຍ | http://www.fdd.gov.la |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນກັບ ໃບອະນຸຍາດ | 1. ພາຍຫຼັງທີ່ກົມອາຫານ ແລະ ຢາ ໄດ້ອອກໃບອະນຸຍາດທາງດ້ານວິຊາສະເພາະແລ້ວ, ຂະແໜງການຄ້າ ແລະ ຂະແໜງອຸດສາຫະກໍາຈະເປັນຜູ້ຄົ້ນຄວ້າອອກອະນຸຍາດດໍາເນີນທຸລະກິດດັ່ງກ່າວ; 2. ສໍາລັບການຜະລິດຢາ ແລະ ອຸປະກອນທາງການແພດທັງຫມົດຕ້ອງໄດ້ຮັບການທົດສອບ ທີ່ຕ້ອງໄດ້ຮັບການອະນຸມັດໂດຍກົມ ແລະ ພາຍຫຼັງຈາກການທົດສອບສໍາເລັດແລ້ວເພື່ອອະນຸຍາດດໍາເນີນການຜະລິດຢາ, ຜະລິດຕະພັນເຫຼົ່ານັ້ນຈະຕ້ອງໄດ້ຂໍຂຶ້ນທະບຽນ. |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ | 45 | ການຍື່ນໃບຄໍາຮ້ອງຈະຖືກສົ່ງເຖິງພະແນກຢາຫຼວງ ແລະ ພະແນກຢາພື້ນເມືອງ ຫຼື ຂະແໜງອາຫານແລະຢາແຂວງ ທີ່ບໍລິສັດຕັ້ງຢູ່. ຫຼັງຈາກນັ້ນ, ໃບຄໍາຮ້ອງຈະໄດ້ຮັບການປະເມີນ, ກວດກາ ແລະ ອະນຸມັດໂດຍແຕ່ລະຂັ້ນຂອງເຈົ້າຫນ້າທີ່ໃນທ້ອງຖິ່ນກ່ອນທີ່ໃບຄໍາຮ້ອງດັ່ງກ່າວຈະຖືກສົ່ງໄປຫາກົມອາຫານ ແລະ ຢາ. ສຸດທ້າຍ, ລັດຖະມົນຕີວ່າການກະຊວງສາທາລະນະສຸກຈະລົງນາມອອກໃບອະນຸຍາດນີ້ (ໃບທະບຽນວິຊາຊີບເພສັດຊະກໍາ). |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ຜູ້ຮ້ອງຂໍຕ້ອງແມ່ນເພສັດຊະກອນເປັນຄົນສັນຊາດລາວ ທີ່ມີໃບປະກາດສະນີຍະບັດ ຫຼື ໃບຢັ້ງຢືນສໍາເລັດການສຶກສາວິຊາຊີບເພສັດຊະກໍາ, ຊຶ່ງໄດ້ຮັບຮອງຈາກກະຊວງສາທາລະນະສຸກ ແລະ ຕ້ອງຜ່ານການຮັບໃຊ້ວຽກງານວິຊາສະເພາະຢ່າງຕໍ່າ 5 ປີ ຈາກບ່ອນທີ່ຕົນເອງສັງກັດເພື່ອເປັນວິຊາການໃຫ້ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງທີ່ຈະດໍາເນີນທຸລະກິດໃນດ້ານນີ້; | |

| ຄຸນະສົມບັດ ແລະ ເອກະສານປະກອບ | |
|---|---|
| | ຖ້າແມ່ນເພສັດຊະກອນທີ່ເປັນຄົນຕ່າງປະເທດຕ້ອງມີໃບປະກາດສະນິຍະບັດ ຫຼື ໃບຢັ້ງຢືນສໍາເລັດການສຶກສາວິຊາຊີບເພສັດຊະກໍາຕ້ອງໄດ້ຖືກຮັບຮອງ ແລະ ຢັ້ງຢືນຈາກສະຖາບັນສຶກສາທີ່ກ່ຽວຂ້ອງແລະກະຊວງສາທາລະນະສຸກລາວ; 2. ສະຖານທີ່ປຸກສ້າງໂຮງງານຕ້ອງຕັ້ງຢູ່ບ່ອນທີ່ບໍ່ມີການປົນເປື້ອນຈາກພາຍນອກແລະສິ່ງແວດລ້ອມອື່ນໆ, ການຈັດວາງຫ້ອງທີ່ເປັນສ່ວນປະກອບຂອງໂຮງງານຕ້ອງຮັບປະກັນບໍ່ໃຫ້ເກີດການປົນເປື້ອນໄດ້ງ່າຍ, ສາມາດຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນຢາ ແລະ ຜູ້ທໍາການຜະລິດ; 3. ຕ້ອງມີຫ້ອງວິໄຈສະເພາະຂອງໂຮງງານປະກອບດ້ວຍບຸກຄະລາກອນວິໄຈທີ່ມີຄວາມສາມາດ ແລະ ມີປະສົບການສູງພ້ອມດ້ວຍອຸປະກອນຮັບໃຊ້ການວິໄຈຢ່າງເໝາະສົມ ແລະ ພຽງພໍ; 4. ມີສາງ ແລະ ສະຖານທີ່ ທີ່ມີມາດຕະຖານສໍາລັບເກັບມ້ຽນຢາແລະຜະລິດຕະພັນການແພດ (ຕາມຫຼັກການການຜະລິດທີ່ດີ (GMP). |
| ມີເຫດຜົນໃດບໍ່ ທີ່ເຈົ້າໜ້າທີ່ ຈະປະຕິເສດ ການຂໍໃບ ອະນຸຍາດ? | ປະຕິເສດໃນກໍລະນີທີ່ຜູ້ຮ້ອງຂໍບໍ່ມີຄຸນສົມບັດທີ່ຄົບຖ້ວນ ແລະ ບໍ່ມີເງື່ອນໄຂທີ່ກໍານົດໄວ້ໄດ້, ໂດຍສະເພາະແມ່ນຫຼັງຈາກການກວດກາໂດຍເຈົ້າຫນ້າທີ່ທີ່ກ່ຽວຂ້ອງ. |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ແມ່ນແລ້ວ | 36 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບ ອະນຸຍາດ | ການຂໍຕໍ່ໃບອະນຸຍາດຕ້ອງສະເໜີຂໍຕໍ່ອາຍຸຄືນໃໝ່ກ່ອນໃບອະນຸຍາດໝົດອາຍຸ 3 ເດືອນເຊິ່ງຕ້ອງປະກອບເອກະສານດັ່ງນີ້: - ໃບຄໍາຮ້ອງຂໍຕໍ່ອາຍຸ; - ໃບຢັ້ງຢືນສຸຂະພາບ; - ໃບຢັ້ງຢືນກໍາມະສິດຂອງໂຮງງານ; - ບົດສະຫຼຸບການເຄື່ອນໄຫວ 1 ປີຜ່ານມາ ແລະ ແຜນການປີຕໍ່ໄປ ; - ເອກະສານການກວດກາໂຮງງານດ້ວຍຕົ້ນເອງ (Self-Inspection); - ໃບທະບຽນເກົ່າຂອງປີຜ່ານມາ (ສະບັບແທ້) |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມຄໍາ ຮ້ອງ ຫລື ບໍ່? | ຄ່າບໍລິການວິຊາ ການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 500000.00 | 0.00 | 500000.00 |

| ຄ່າທໍານຽມ | |
|---|---|
| **ຄໍາເຫັນ** | ອີງຕາມລັດຖະບັນຍັດປະທານປະເທດ ເລກທີ 03/ປທ |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 500000.00 | 0.00 | 500000.00 |
| **ຄໍາເຫັນ** | ອີງຕາມລັດຖະບັນຍັດປະທານປະເທດ ເລກທີ 03/ປທ | | | |

| ນິຕິກໍາທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ນິຕິກໍາ** | **ເລກທີ** | **ວັນທີ** | **ຄໍາເຫັນ** |
| ຂໍ້ກໍານົດວ່າດ້ວຍ ການຜະລິດຢາ ແລະ ຜະລິດຕະພັນການແພດ | 937/ກຊສ | 12.05.2004 | ມາດຕາ 3,4,5 ແລະ 6 |
| ກົດໝາຍວ່າດ້ວຍ ຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ) | 07/ສພຊ | 21.12.2011 | ພາກທີ III, ໝວດທີ 1, ມາດຕາ 12,14 ແລະ 15 |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈໍາກັດ |
| ໃບຕາດິນ |
| ສໍາເນົາພາດສະປອດ / ໜັງສືຜ່ານແດນ |
| ໃບແຈ້ງໂທດ |
| ແຜນວາດທີ່ຕັ້ງຂອງວິສາຫະກິດ |
| ຮູບ |
| ໃບຢັ້ງຢືນທີ່ຢູ່ |

| ເອກະສານປະກອບ |
|---|
| ໃບຢັ້ງຢືນສຸຂະພາບ |
| ໃບຢັ້ງຢືນວຸດທິການສຶກສາ |
| ຊີວະປະຫວັດ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | | |